ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 12 /ທຄຕລ ..................
ນະຄອນຫຼວງວຽງຈັນ, ວັນທີ: 29/04/2022

# ມະຕິ

## ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2021.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ຂຶ້ນໃນເວລາ 14:05 ໂມງ ຫາ 15:00 ໂມງ ຂອງວັນທີ 29 ເມສາ 2022 ທີ່ໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ຄຳສຸກ ສູນດາລາ, ຮອງ ປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 25 ທ່ານ, ຜູ້ມອບສິດຈຳນວນ 147 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 158.149.080 ຮຸ້ນ, ນັບທັງ 1.005.209 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 76,14% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 49.574.220 ຮຸ້ນ ເທົ່າກັບ 23,86 % ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

**ກອງປະຊຸມ ໄດ້ພິຈາລະນາ ແລະ ມີມະຕິດັ່ງນີ້:**

**ວາລະທີ 1: ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນປະຈຳປີ 2021.**

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງ ເປັນເອກະພາບຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 158.149.080 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 2: ຮັບຮອງ ບົດລາຍງານການດຳເນີນທຸລະກິດຂອງ ທຄຕລ ໃນປີ 2021 ແລະ ເອກະສານລາຍງານການເງິນປະຈຳປີ 2021 ທີ່ໄດ້ຮັບການກວດສອບຈາກ ບໍລິສັດ PWC, ການແບ່ງປັນກຳໄລຫຼັງອາກອນເຂົ້າຄັງຕ່າງໆຕາມລະບຽບການ ແລະ ຕົກລົງບໍ່ຈ່າຍເງິນປັນຜົນປະຈຳປີ 2021:**

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງ ເປັນເອກະພາບຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 158.149.080 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

**ວາລະທີ 3: ຮັບຮອງແຜນການປະຈໍາປີ 2022:**

ໃນນັ້ນລວມມີແຜນທຸລະກິດ, ແຜນຂະຫຍາຍຕາໜ່າງບໍລິການ, ແຜນປະກອບວັດຖຸເຕັກນິກ- ກໍ່ສ້າງ ແລະ ສ້ອມແປງ, ແຜນຮັບພະນັກງານໃໝ່ຂອງ ທຄຕລ ໃນປີ 2022, ໃນກໍລະນີມີຄວາມຈໍາເປັນໃນການດັດແກ້ແຜນ ແມ່ນເຫັນດີມອບອໍານາດໃຫ້ສະພາບໍລິຫານ ທຄຕລ ພິຈາລະນາຮັບຮອງ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງເປັນເອກະພາບຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈໍານວນ: 158.149.080 ສຽງ, ເທົ່າກັບ 100% ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈໍານວນ: 0 ສຽງ, ເທົ່າກັບ 0% ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 4: ຮັບຮອງການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ**

ເພື່ອເປັນໂອກາດໜຶ່ງໃນການສ້າງລາຍຮັບໃຫ້ ທຄຕລ, ເປົ້າໝາຍໃນການດໍາເນີນທຸລະກິດແມ່ນເພື່ອບໍລິຫານຈັດການ ໜີ້/ຊັບສິນ ທີ່ຊື້ຫລຸດຈາກ ທະນາຄານ/ສະຖາບັນການເງິນ ເພື່ອນໍາມາປັບປຸງ-ພັດທະນາໃຫ້ສາມາດສ້າງລາຍຮັບ ຫລື ກາຍເປັນຊັບສິນທີ່ໄດ້ມາດຕະຖານ ແລະ ເປັນທີ່ຕ້ອງການຂອງຕະຫລາດຫລາຍຂຶ້ນ.

ກອງປະຊຸມເຫັນດີມອບອໍານາດໃຫ້ສະພາບໍລິຫານພິຈາລະນາຮັບຮອງບັນຫາໃດໆທີ່ຕິດພັນກັບການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ;

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈໍານວນ: 158.147.210 ສຽງ,ເທົ່າກັບ 99,999%ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈໍານວນ: 1.870 ສຽງ, ເທົ່າກັບ 0,001 % ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 5: ພິຈາລະນາ ແລະ ຮັບຮອງແຕ່ງຕັ້ງເອົາຜູ້ກວດສອບອິດສະຫຼະປະຈໍາປີ 2022.**

ກອງປະຊຸມເຫັນດີເລືອກເອົາບໍລິສັດພຣາຍສວໍເຕີເຮົ້າສກູບເປີສ ລາວ ຈໍາກັດຜູ້ດຽວ (PWC) ເປັນຜູ້ກວດສອບຖານະການເງິນ ທຄຕລ ປະຈໍາປີ 2022.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈໍານວນ: 158.147.210 ສຽງ,ເທົ່າກັບ 99,999%ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈໍານວນ: 1.870 ສຽງ, ເທົ່າກັບ 0,001 % ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ມະຕິກອງປະຊຸມສະບັບນີ້ ຖືເປັນບ່ອນອີງສໍາຄັນ ສໍາລັບທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເພື່ອແຈ້ງໃຫ້ຜູ້ຖືຮຸ້ນ, ນັກລົງທຶນ, ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ນໍາໄປຈັດຕັ້ງປະຕິບັດ.

**ປະທານກອງປະຊຸມ**

**ຄໍາສຸກ ສູນດາລາ**